# ປະເທດລາວ

**PATHETLAO DAILY**

ປີທີ IV ສະບັບທີ 10100 ວັນ ພຸດ 30.3.2005

ສໍານັກງານເລກທີ 80 ຖະໜົນເສດຖາທິລາດ ນະຄອນຫລວງວຽງຈັນ ສປປ.ລາວ Email: ptl@kpl.net.la Tel/Fax: 212447




# ຊຽງຂວາງປະດັບຫລຽນກາ ພັດທະນາໃຫ້ທ່ານລຸດວິນອຍເບີ



* ເມື່ອອາທິດຜ່ານມານີ້, ຄະນະປົກຄອງແຂວງຊຽງຂວາງ ໄດ້ຈັດພິທີປະດັບຫລຽນກາພັດທະນາໃຫ້ທ່ານ ລຸດວິນອຍເບີ ເຈົ້າເມືອງ ມອນສະປຣາດແຟ ແຫ່ງປະເທດ ສ ເຢຍລະມັນ, ທີ່ໄດ້ມີຜົນງານດີເດັ່ນໃນການຂົນຂວາຍແຫລ່ງທຶນເພື່ອຊ່ວຍການພັດທະນາໂຮງຮຽນ, ໂຮງໝໍ ແລະ ການປະຕິສັງຂອນວັດວາອາຣາມຕ່າງໆ ໃນແຂວງຊຽງຂວາງທີ່ຖືກສົງຄາມທຳລາຍໃນເມື່ອກ່ອນ ໃຫ້ກັບຄືນສູ່ສະພາບເດີມ.

ທ່ານ ລຸດວິນອຍເບີ ໄດ້ເລີ່ມຂົນຂວາຍແຫລ່ງທຶນເຂົ້າມາຊ່ວຍເຫລືອແຂວງຊຽງຂວາງມາໄດ້ຫລາຍປີແລ້ວຄື: ປີ 2001 ໄດ້ສຳເລັດການໃຫ້ທຶນກໍ່ສ້າງໂຮງຮຽນບ້ານຕອງ, ບ້ານບານ ແລະ ບ້ານ ຈອມແຈ້ງເມືອງຄຳ, ດ້ວຍມູນຄ່າຫລາຍກ່ວາ 35 ລ້ານກີບ, ປະກອບສ່ວນສ້າງໂຮງໝໍເມືອງຄຳ ຈຳນວນ 8.000 ໂດລາ, ກໍ່ສ້າງສິມວັດບ້ານບານມູນຄ່າ 180 ລ້ານກ່ວາກີບ ແລະ ປະກອບທຶນກໍ່ສ້າງເດີ່ນກິລາເມືອງຄຳຈຳນວນ 6.000 ໂດລາ, ພ້ອມນັ້ນທ່ານເຈົ້າເມືອງດັ່ງກ່າວຍັງໄດ້ໃຫ້ທຶນສະໜັບສະໜູນໃນການປົກປັກຮັກສາ ບັນດາໂຮງຮຽນທີ່ທ່ານໃຫ້ການຊ່ວຍເຫລືອເດືອນລະ 25 ຢູໂຣ ເພື່ອໃຫ້ການນຳໃຊ້ໄດ້ຍາວນານ.

ເປັນກຽດປະດັບຫລຽນດັ່ງກ່າວໃຫ້ທ່ານ ລຸດວິນອຍເບີ, ໂດຍທ່ານສີວອນ ຢາຍົງເຢຍ ເຈົ້າແຂວງຊຽງຂວາງ ເພື່ອສະແດງຄວາມຮູ້ບຸນຄຸນຕໍ່ການຊ່ວຍເຫລືອອັນມີຜົນດັ່ງກ່າວ.